ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງການຄ້າ

ເລກທີ 0340/ກຄ.ຕປທ

ນະຄອນວຽງຈັນ, ວັນທີ 27 ມີນາ 2003

# ແຈ້ງການ

## ຂອງລັດຖະມົນຕີວ່າການກະຊວງການຄ້າ

## ກ່ຽວກັບການນຳເຂົ້າລົດ, ສິ້ນສ່ວນອາໄລ່ລົດ ເພື່ອມາປະກອບຢູ່ໂຮງງານ

- ອີງຕາມດຳລັດ ເລກທີ 205/ນຍ ລົງວັນທີ 11/10/01 ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ການນຳເຂົ້າ.
- ອີງຕາມຂໍ້ກຳນົດ ເລກທີ 105/ກຄ.ຕປທ ລົງວັນທີ 25/1/02 ວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ການຈຳໜ່າຍລົດ.
- ອີງຕາມຂໍ້ຕົກລົງ ເລກທີ 14/ນຍ ລົງວັນທີ 28/2/03 ຂອງນາຍົກລັດຖະມົນຕີ ກ່ຽວກັບການນຳເຂົ້າລົດ, ສິ້ນສ່ວນອາໄຫລ່ລົດ ເພື່ອມາປະກອບຢູ່ໂຮງງານ

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດ, ຂໍ້ກຳນົດ ແລະ ຂໍ້ຕົກລົງທີ່ກ່າວມາຂ້າງເທິງ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີວ່າການກະຊວງການຄ້າອອກແຈ້ງການ

1. ການນຳເຂົ້າລົດ, ສິ້ນສ່ວນອາໄຫລ່ລົດ ເພື່ອມາປະກອບຢູ່ໂຮງງານ ແມ່ນດຳເນີນການຕາມກົນໄກຕະຫລາດ ແລະ ພາຍໃຕ້ລະບຽບກົດໝາຍ ເປັນຕົ້ນກົດໝາຍສ່ວຍສາອາກອນ ສະບັບເລກທີ 10/ສຍຊ ລົງວັນທີ 12/10/02 ແລະ ກົດໝາຍພາສີ ສະບັບເລກທີ 04/94 ລົງວັນທີ 18/7/1994 ໂດຍເສັຍພາສີ-ອາກອນເທື່ອດຽວ ກ່ອນນຳເຂົ້າ.
2. ເພື່ອຮັບປະກັນການຄຸ້ມຄອງລວມສູນເປັນເອກະພາບ ກະຊວງການຄ້າ ເປັນຜູ້ອອກອະນຸຍາດນຳເຂົ້າ, ສຳລັບມາດຕະຖານດ້ານເຕັກນິກຂອງລົດ ແລະ ສິ້ນສ່ວນຂອງລົດ ເພື່ອມາປະກອບ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 4312/ຄຂປກ, ລົງວັນທີ 11/11/02. ສຳລັບສິ້ນສ່ວນລົດທີ່ໃຊ້ແລ້ວ ( ລົດມືສອງ ) ປະເພດລົດຮັບ

ໃຊ້ການຜະລິດ ແລະ ການບໍລິການຂົນສົ່ງໂດຍສານ ກໍ່ຄືການຂົນສົ່ງສິນຄ້າຕ່າງໆ, ທີ່ນຳເຂົ້າມາໃນຮູບແບບ SKD/IKD ຕາມລະບຽບການຂອງກະຊວງອຸດສາຫະກຳ-ຫັດຖະກຳນັ້ນ ຄຸນນະພາບຂອງລົດທີ່ຟື້ນຟູແລ້ວຕ້ອງບໍ່ໃຫ້ຫລຸດ 80% ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງ ເລກທີ 14/ນຍ, ລົງວັນທີ 28/2/03 ຢ່າງເຂັ້ມງວດ.

3. ການນຳເຂົ້າລົດຂອງນັກການທູດ, ຊ່ຽວຊານຕ່າງປະເທດ, ອົງການຈັດຕັ້ງສາກົນ, ການນຳເຂົ້າຮັບໃຊ້ໂຄງການລົງທຶນພາຍໃນ ຫລື ຕ່າງປະເທດ, ການຊ່ວຍເຫລືອລ້າ ແລະ ກູ້ຢືມຕ່າງໆ ແມ່ນຕ້ອງປະຕິບັດຕາມລະບຽບ ແລະ ກົດໝາຍກ່ຽວຂ້ອງທີ່ໄດ້ປະກາດໃຊ້ແລ້ວ, ຫລັງຈາກນັ້ນ ກະຊວງການຄ້າ ອອກອະນຸຍາດນຳເຂົ້າຄືກັບຜ່ານມາ.

4. ການນຳເຂົ້າລົດຮັບໃຊ້ສຳນັກງານອົງການຂອງລັດຖະບານ, ອົງການຈັດຕັ້ງພັກ, ສະພາແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ ລວມທັງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໃຫ້ປະຕິບັດຕາມແຈ້ງການ ສະບັບເລກທີ 0886/ຫສນຍ.ກລຂ, ລົງວັນທີ 19/5/2000 ໂດຍຜ່ານການອະນຸມັດງົບປະມານຈາກກະຊວງການເງິນເທົ່ານັ້ນ.

5. ການນຳເຂົ້າລົດຕາມດຳລັດ ເລກທີ 71/ນຍ, ລົງວັນທີ 28/5/02 ກະຊວງການຄ້າມອບຕົວເລກນຳເຂົ້າໃຫ້ກະຊວງແຮງງານ ເປັນແຕ່ລະປີ ເພື່ອຈັດສັນຕາມເນື້ອໃນຂອງດຳລັດ ເລກທີ 71/ນຍ ຫລັງຈາກນັ້ນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແຈ້ງຄືນມາຍັງ ກະຊວງການຄ້າ ເພື່ອອອກອະນຸຍາດນຳເຂົ້າ ໂດຍຜູ້ໄດ້ຮັບນະໂຍບາຍ ຕ້ອງໄດ້ປະຕິບັດຂັ້ນຕອນເສັຍພາສີ ແລະ ອາກອນຄົບຖ້ວນ ຕາມລະບຽບການ ແລະ ຂັ້ນຕອນ ທີ່ບົ່ງໄວ້ໃນຂໍ້ 8 ຂອງແຈ້ງການ ສະບັບນີ້.

6. ຜູ້ນຳເຂົ້າລົດ, ສິ້ນສ່ວນລົດປະກອບ ເພື່ອມາຈຳໜ່າຍ ຕ້ອງປະກອບດ້ວຍເງື່ອນໄຂ ຕາມທີ່ລະບຸໄວ້ໃນຂໍ້ກຳນົດ ເລກທີ 105/ກຄ.ຕປທ, ລົງວັນທີ 25/10/02 ວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ການຈຳໜ່າຍລົດ. ນອກຈາກນີ້ ສຳລັບຜູ້ນຳເຂົ້າສິ້ນສ່ວນລົດປະກອບ ໃຫ້ສະເຫນີຜ່ານກະຊວງອຸດສາຫະກຳ ແລະ ຫັດຖະກຳ.

7. ບຸກຄົນ, ນິຕິບຸກຄົນສາມາດນຳລົດເຂົ້າມາໄວ້ສາງພັກສິນຄ້າຊົ່ວຄາວ ( ສາງຈິງ ) ຢູ່ດ່ານສາກົນ ແຕ່ຕ້ອງປະຕິບັດຕາມຂໍ້ກຳນົດ ເລກທີ 105/ກຄ.ຕປທ, ລົງວັນທີ 25/01/02 ວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ການຈຳໜ່າຍລົດ. ບຸກຄົນ, ນິຕິບຸກຄົນສາມາດນຳລົດທີ່ຢູ່ສາງພັກສິນຄ້າຊົ່ວຄາວ ( ສາງຈິງ ) ອອກຈຳໜ່າຍໄປປະເທດທີສາມໄດ້ຕາມຂໍ້ກຳນົດ ເລກທີ 1195/ກຄ, ລົງວັນທີ 19/10/01 ວ່າດ້ວຍທຸລະກິດການຄ້າຂາອອກຕໍ່ ແລະ ເງື່ອນໄຂລະບຽບການຂອງຂະແໜງການກ່ຽວຂ້ອງກຳນົດໄວ້.

8. ຂັ້ນຕອນການຂໍອະນຸຍາດນຳເຂົ້າໃຫ້ປະຕິບັດດັ່ງນີ້ : ບຸກຄົນ, ນິຕິບຸກຄົນທີ່ມີຈຸດປະສົງຂໍນຳເຂົ້າລົດ, ແລະ ສິ້ນສ່ວນລົດ ເພື່ອມາປະກອບຢູ່ໂຮງງານ ຕ້ອງຍື່ນໃບສະເຫນີຂໍອະນຸຍາດນຳເຂົ້າ ຢູ່ກະຊວງການຄ້າ ( ກົມການຄ້າຕ່າງປະເທດ ) ເພື່ອແຈ້ງຈຳນວນ ແລະ ປະເພດລົດທີ່ຈະນຳເຂົ້າ ຖ້າແມ່ນສິ້ນສ່ວນເພື່ອມາປະກອບຈະຕ້ອງຜ່ານກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງການຄ້າ ( ກົມການຄ້າຕ່າງປະເທດ ) ຈະສົ່ງຕໍ່ໄປຍັງກົມຂົນສົ່ງ ກະຊວງ ຄຂປກ ເພື່ອອະນຸຍາດທາງດ້ານເຕັກນິກ, ຫລັງຈາກນັ້ນ ຈິ່ງໄປເສັຍພາສີ-ອາກອນນຳຂະແໜງການເງິນແລ້ວນຳເອກະສານທັງ

ໝົດລວມທັງໃບຢັ້ງຢືນເສຍພາສີ-ອາກອນມາຍັງກະຊວງການຄ້າ ( ກົມການຄ້າຕ່າງປະເທດ ) ເພື່ອກວດກາ ແລະ ອອກອະນຸຍາດນຳເຂົ້າ. ພາຍຫລັງທີ່ ບຸກຄົນ ນິຕິບຸກຄົນ ໄດ້ໃບອະນຸຍາດແລ້ວ ຈຶ່ງໄປຍື່ນຕໍ່ເຈົ້າໜ້າທີ່ປະຈຳດ່ານ ຫລື ສາງພັກສິນຄ້າ ກວດກາ ແລະ ນຳເຂົ້າຕາມລະບຽບການ.

໙. ໃນກໍລະນີປະເພດລົດ, ສິ້ນສ່ວນປະກອບທີ່ບໍ່ມີຢູ່ໃນຕາຕະລາງ ເພື່ອແຈ້ງເສັຍພາສີ-ອາກອນ, ຜູ້ນຳເຂົ້າຈະຕ້ອງເອົາລາຄາໄປແຈ້ງຕໍ່ກົມການຄ້າພາຍໃນ ກະຊວງການຄ້າ ເພື່ອໄລ່ລຽງລົມເຫດສົມຜົນເສັຍກ່ອນຈຶ່ງສາມາດໄປເສັຍພາສີ-ອາກອນນຳເຂົ້ານຳຂະແໜງການເງິນ.

10. ສະເພາະໃບອະນຸຍາດທີ່ກະຊວງການຄ້າ ( ກົມການຄ້າຕ່າງປະເທດ ) ໄດ້ອອກອະນຸຍາດໃຫ້ແລ້ວນັ້ນ ໃຫ້ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ສືບຕໍ່ອອກແປ້ກມັນຳເຂົ້າລົດ, ສິ້ນສ່ວນລົດເພື່ອມາປະກອບໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຈົນກວ່າໃບອະນຸຍາດດັ່ງກ່າວ ຈະໝົດອາຍຸ.ແຕ່ບຸກຄົນ, ນິຕິບຸກຄົນຕ້ອງໄດ້ເສັຍພາສີ-ອາກອນຕາມອັດຕາໃໝ່. ນັບແຕ່ວັນທີ 1/4/03 ເປັນຕົ້ນໄປ ກະຊວງການຄ້າ ( ກົມການຄ້າຕ່າງປະເທດ ) ຈະເປັນຜູ້ອອກໃບອະນຸຍາດນຳເຂົ້າລົດ, ສິ້ນສ່ວນລົດເພື່ອມາປະກອບ ແລະ ຈະສົ່ງຕໍ່ໂດຍກົງໃຫ້ໜ່ວຍງານ ບ.ປ.ດ ( ການຄ້າ ), ວິຊາການກວດກາເຕັກນິກຂອງຂະແໜງ ຄຂປກ ແລະ ເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອກວດກາຕົວຈິງເຫັນວ່າຖືກຕ້ອງແລ້ວຈຶ່ງສາມາດນຳເຂົ້າເລີຍ ທັງນີ້ກໍ່ເພື່ອຫລຸດຜ່ອນຂັ້ນຕອນການປະກອບເອກະສານ ແລະ ອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນດັ່ງກ່າວ.

ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ວັນທີ 1/4/03 ເປັນຕົ້ນໄປ. ສ່ວນແຈ້ງການ ສະບັບເລກທີ 151/ກຄ.ຕປທ ລົງວັນທີ 8/2/02 ແມ່ນລົບລ້າງ.

ຕງ. ລັດຖະມົນຕີວ່າການກະຊວງການຄ້າ,

ກະຊວງການຄ້າ ລັດຖະມົນຕີ

ສຽວສະຫວາດ ສະແຫວງສຶກສາ